**ມິຊຊາອາທິດທີ 7 ການົດທຳມະດາ**

**ວັນທີ 19 ກຸມພາ 2023**



**ພຣະວໍລະສານໂດຍນັກບຸນມັດເທວ 5, 38-48**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງກ່າວແກ່ພວກສາວົກວ່າ: "ພວກເຈົ້າກໍເຄີຍໄດ້ຍິນຄຳກ່າວວ່າ: "ຕາແທນຕາ, ແຂ້ວແທນແຂ້ວ". ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: "ຢ່າຂັດສູ້ຄົນຊົ່ວ. ແຕ່ວ່າຫາກໃຜຕົບແກ້ມຂວາຂອງເຈົ້າ ກໍຈົ່ງປິ່ນແກ້ມຊ້າຍໃຫ້ເຂົາຕົບອີກ. ຖ້າຜູ້ໃດຟ້ອງຕໍ່ສານຢາກໄດ້ເສື້ອຊັ້ນໃນຂອງເຈົ້າ ກໍຈົ່ງແກ້ເສື້ອຊັ້ນນອກຕື່ມໃຫ້ເຂົາອີກ. ແລະຜູ້ໃດເກນເຈົ້າໃຫ້ຍ່າງໄປນຳເຂົາຫລັກໜຶ່ງ ກໍຈົ່ງຍ່າງນຳເຂົາຮອດສອງຫລັກ. ຜູ້ໃດຂໍຫຍັງກໍຈົ່ງໃຫ້ເຂົາ ແລະຢ່າປິ່ນຫລັງໃສ່ຜູ້ມາຂໍຢືມນຳເຈົ້າເປັນອັນຂາດ.

ພວກເຈົ້າຍັງເຄີຍໄດ້ຍິນຄຳກ່າວວ່າ: "ຈົ່ງຮັກເພື່ອນບ້ານຂອງເຈົ້າ ແລະຈົ່ງກຽດຊັງສັດຕູຂອງເຈົ້າ". ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: "ຈົ່ງຮັກສັດຕູແລະຈົ່ງພາວະນາອຸທິດໃຫ້ຄົນທີ່ບັງບຽດພວກເຈົ້າ ເພື່ອໃຫ້ພວກເຈົ້າຈະໄດ້ເປັນບຸດຂອງພຣະບິດາເຈົ້າສະຫວັນ, ຜູ້ໂຜດໃຫ້ດວງຕາເວັນຂອງພຣະອົງສ່ອງແສງໃຫ້ທັງຄົນດີແລະຄົນຊົ່ວ; ແລະໂຜດໃຫ້ຝົນຕົກຮວາຍຣຳທັງຄົນຊອບທຳແລະຄົນອະທຳ. ຖ້າພວກເຈົ້າຮັກແຕ່ຄົນທີ່ຮັກພວກເຈົ້າ, ພວກເຈົ້າຈະໄດ້ຮັບບຳເໜັດລາງວັນຫຍັງ? ບັນດາຄົນເກັບສ່ວຍທັງຫລາຍກໍບໍ່ທຳຢ່າງດຽວກັນນີ້ບໍ? ແລະຖ້າພວກເຈົ້າຄຳນັບແຕ່ພວກພີ່ນ້ອງຂອງພວກເຈົ້າເທົ່ານັ້ນ, ພວກເຈົ້າກະທຳອັນໃດລື່ນເຂົາແດ່? ຄົນຕ່າງສາດສະໜາກໍບໍ່ທຳຢ່າງດຽວກັນນີ້ບໍ?

ດັ່ງນັ້ນ, ພວກເຈົ້າຈົ່ງເປັນຜູ້ດີບໍລິບູນ ເໝືອນພຣະບິດາເຈົ້າສະຫວັນຊົງເປັນຜູ້ດີບໍລິບູນນັ້ນເຖີດ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ໃນບົດອ່ານທີໜຶ່ງຂອງວັນນີ້ຊຶ່ງມາຈາກໜັງສືສັງຄະວິໄນ (ຫລືໜັງສືຂອງພວກເລວີ) ພຣະເຈົ້າໄດ້ໄຂສຳແດງຄວາມສັກສິດຂອງພຣະອົງໃຫ້ປະຊາກອນອິສຣາແອນຮູ້ຜ່ານທາງໂມແຊ. ແລະໃນເວລາດຽວກັນພຣະອົງກໍຊົງຮຽກເອີ້ນປະຊາກອນຂອງພຣະອົງໃຫ້ເປັນເໝືອນພຣະອົງຄືເປັນຜູ້ສັກສິດ. ແຕ່ເຮັດແນວໃດພວກເຮົາຈຶ່ງຈະເປັນຜູ້ສັກສິດໄດ້? ພວກເຮົາຈະເປັນຜູ້ສັກສິດໄດ້ກໍຕໍ່ເມື່ອພວກເຮົາປະຕິບັດຕາມພຣະທຳບັນຍັດຂອງພຣະເຈົ້າ. ແລະເປັນຕົ້ນພຣະບັນຍັດເອກຂອງພຣະອົງຄື ບັນຍັດແຫ່ງຮັກນັ້ນເອງ. ດັ່ງທີ່ພຣະອົງກ່າວໃນໜັງສືສັງຄະວິໄນ (ຫລືໜັງສືຂອງພວກເລວີ)ວ່າ: *"ຈົ່ງຮັກເພື່ອນບ້ານຄືຮັກຕົວເຈົ້າເອງ"*. ຍ້ອນຫຍັງ? ຍ້ອນວ່າພວກເຮົາແຕ່ລະຄົນລ້ວນແຕ່ເປັນວິຫານຂອງພຣະເຈົ້າ, ເປັນບ່ອນສະຖິດຢູ່ຂອງພຣະຈິດເຈົ້າ. ດັ່ງທີ່ນັກບຸນເປົາໂລໄດ້ເທດສອນຊາວໂກຣິນໂທໃນບົດອ່ານທີສອງວັນນີ້. ຖ້າພວກເຮົາຄຽດຊັງຫລືທຳຮ້າຍຄົນອື່ນ ພວກເຮົາກໍຄຽດຊັງແລະທຳຮ້າຍວິຫານຂອງພຣະເຈົ້າ. ຫລືເວົ້າອີກຢ່າງ, ພວກເຮົາກໍທຳຮ້າຍພຣະເຈົ້ານັ້ນເອງ. ເພາະພຣະເຈົ້າຢູ່ໃນພວກເຮົາແຕ່ລະຄົນ. ຖ້າພວກເຮົາຮັກພຣະເຈົ້າ, ພວກເຮົາຕ້ອງຮັກມະນຸດດ້ວຍ, ແມ່ນກະທັ້ງຜູ້ທີ່ທຳຮ້າຍເຮົາ. ດັ່ງທີ່ພຣະເຢຊູເຈົ້າກ່າວໃນວາຈາພຣະອົງວັນນີ້: "ຈົ່ງຮັກສັດຕູແລະຈົ່ງພາວະນາອຸທິດໃຫ້ຄົນທີ່ບັງບຽດພວກເຈົ້າ". ຄຳສອນຂອງພຣະເຢຊູເຈົ້າວັນນີ້ບໍ່ແມ່ນສິ່ງງ່າຍໃນການປະຕິບັດ, ແຕ່ພຣະເຢຊູເຈົ້າເອງໄດ້ປະຕິບັດແລ້ວໃນຊີວິດຂອງພຣະອົງ, ດ້ວຍການຍອມຕາຍບົນໄມ້ກາງເຂນເພື່ອພວກເຮົາຜູ້ເປັນຄົນບາບ, ຄົນທໍລະຍົດ. ແລະພຣະອົງເອງກໍໄດ້ສອນພວກເຮົາໃຫ້ພາວະນາຫາພຣະບິດາເພື່ອໃຫ້ຄວາມຮັກຂອງພຣະບິດາຊ່ວຍພວກເຮົາໃຫ້ຮູ້ຈັກຮັກແລະໃຫ້ອະໄພແກ່ຄົນອື່ນ. ດັ່ງໃນບົດໂອພຣະບິດາວ່າ: "ຂໍໂຜດຜິດໃຫ້ພວກຂ້າພະເຈົ້າ ຄືພວກຂ້າພະເຈົ້າໂຜດໃຫ້ເຂົາ". ໝາຍວ່າ ຖ້າພວກເຮົາຢາກໃຫ້ພຣະເຈົ້າອະໄພໂທດໃຫ້ພວກເຮົາ, ພວກເຮົາກໍຕ້ອງໃຫ້ອະໄພແກ່ຄົນອື່ນເຊັ່ນກັນ. ສິ່ງນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈວ່າ ຄວາມຮັກຕໍ່ພຣະເຈົ້າແລະຄວາມຮັກຕໍ່ມະນຸດນັ້ນບໍ່ສາມາດແຍກອອກຈາກກັນໄດ້. ເພາະພວກເຮົາທຸກຄົນລ້ວນແຕ່ເປັນລູກພຣະເຈົ້າແລະລ້ວນແຕ່ເປັນອ້າຍນ້ອງກັນໃນຄວາມເຊື່ອແລະຄວາມຮັກ. ຍ້ອນພຣະເຈົ້າຂອງພວກເຮົາເປັນພຣະເຈົ້າແຫ່ງຄວາມຮັກ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຕື່ມເຕັມຄວາມຮັກຂອງພຣະອົງລົງມາໃນໃຈຂອງລູກ, ເພື່ອລູກຈະໄດ້ຮັກຜູ້ອື່ນດ້ວຍຄວາມຮັກຂອງພຣະອົງ. ເພື່ອລູກຈະຮຽນຮູ້ໃຫ້ອະໄພແກ່ຄົນອື່ນ ດັ່ງທີ່ພຣະອົງໃຫ້ອະໄພແກ່ລູກນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ